(O-2024-115)

ບົດສະຫຼຸບຂອງທະນາຍຄວາມປະຈຳເມືອງ

ຄຳສັ່ງໝາຍເລກ O-__21823____ (ຄຳສັ່ງຊຸດໃໝ່)

ວັນສຸດທ້າຍຂອງການຜ່ານການອະນຸມັດ 10 ມິຖຸນາ 2024

ຄຳສັ່ງຂໍໃຫ້ມີການເລືອກຕັ້ງເທດສະບານທົ່ວໄປໃນເມືອງຊານດິເອໂກໃນ ວັນທີ 5 ເດືອນພະຈິກ 2024 ແລະໃຫ້ລວມການເລືອກຕັ້ງທົ່ວໄປຂອງລັດ ມາໄວ້ໃນວັນດຽວກັນ.

ຄຳສັ່ງນີ້ຂໍໃຫ້ການເລືອກຕັ້ງເທດສະບານທົ່ວໄປໃນເມືອງຊານດິເອໂກມີຂຶ້ນໃນວັນທີ 5 ເດືອນພະຈິກ 2024 ເພື່ອທີ່ຈະສະເໜີຊື່ຜູ້ສະໝັກເລືອກຕັ້ງສຳລັບຫ້ອງການເຈົ້າເມືອງ (Mayor), ໄອຍະການເມືອງ (City Attorney), ແລະ ສະມາຊິກສະພາເຂດທີ 3 ແລະ 9 ຕາມລຳດັບ, ອີງຕາມຂໍ້ກຳນົດຂອງທຳມະນູນຂອງເມືອງ ຊານດິເອໂກ ມາດຕາ 10, 12 ແລະ 270(a). ຄຳສັ່ງນີ້ສັ່ງໃຫ້ລວມການເລືອກຕັ້ງເທດສະບານທົ່ວໄປເຂົ້າກັບ ການເລືອກຕັ້ງທົ່ວໄປຂອງລັດມາໄວ້ໃນວັນທີ 5 ເດືອນພະຈິກ 2024. ຄຳສັ່ງນີ້ໄດ້ແຈ້ງໃຫ້ຄະນະກຳມະການທີ່ ເປັນຜູ້ເບິ່ງແຍງ (Board of Supervisors) ຈັດກຸ່ມເຂດເລືອກຕັ້ງຕ່າງໆໄວ້ ແລະ ສູນອອກຄະແນນສຽງ ເລືອກຕັ້ງຈະເປີດຕັ້ງແຕ່ເວລາ 7:00 ໂມງເຊົ້າ ຫາ 8:00 ໂມງແລງໃນວັນເລືອກຕັ້ງ. ຄຳສັ່ງນີ້ຍັງອະນຸຍາດໃຫ້ ຜູ້ທີ່ໄດ້ລົງຊື່ເພື່ອເລືອກຕັ້ງຂອງແຂວງຊານດິເອໂກເພື່ອສອບຖາມຄວາມຄິດເຫັນກ່ຽວກັບການກັບຄືນມາ ຂອງການເລືອກຕັ້ງເທດສະບານທົ່ວໄປ.

ຄຳສັ່ງນີ້ປະກອບດ້ວຍການແຈ້ງໃຫ້ຊາບວ່າຈະມີການອ່ານຄຳສັ່ງກ່ອນຈະໃຫ້ຜ່ານ, ສຳເນົາທີ່ຂຽນ ຂຶ້ນ ຫຼື ພິມຂຶ້ນສາມາກຂໍໄດ້ທີ່ສະພາເມືອງຊານດິເອໂກ (City Council) ແລະຝ່າຍບໍລິການສາທາລະນະກ່ອນ ການຜ່ານຄຳສັ່ງ.

ອີງຕາມມາດຕາ 275(c), 295(b), ແລະ 295(d) ຂອງທຳມະນູນເມືອງຊານດິເອໂກ, ຄຳສັ່ງທີ່ກ່ຽວຂ້ອງ ກັບການເລືອກຕັ້ງສາມາດຜ່ານໄດ້ໂດຍສະພາຂອງເມືອງໃນວັນທີ່ເປີດຕົວຊື່ງຈະເປັນວັນທີ່ຂັ້ນຕອນໃນ ການຜ່ານຄຳສັ່ງຂັ້ນຕອນສຸດທ້າຍ.

ຈະຕ້ອງມີສຳເນົາຂອງຄຳສັ່ງນີ້ສຳລັບການກວດສອບໄວ້ທີ່ຫ້ອງການສະເໝີຍນຂອງເມືອງຊານດິເອໂກ (City Clerk of the City of San Diego), 2nd Floor, City Administration Building, 202 C Street, San Diego, CA 92101.

KJS:jdf
05/13/24
Or.Dept: City Clerk
Doc. No.: 3648535